ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 0440 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 30 ມີນາ 2023

# ຂໍ້ຕົກລົງ
# ວ່າດ້ວຍຖິ່ນກຳເນີດ

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມຊັບສິນທາງປັນຍາ ສະບັບເລກທີ 0298/ກຊປ.ອຄ, ລົງວັນທີ 10 ມີນາ 2023.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຖິ່ນກຳເນີດ ເປັນຕົ້ນ ການຈົດທະບຽນ, ການດຳເນີນການຫຼັງການຈົດທະບຽນ, ການໝາຍຖິ່ນກຳເນີດແຫ່ງຊາດ, ສິດ ແລະ ໜ້າທີ່ຂອງເຈົ້າຂອງຖິ່ນກຳເນີດ ແລະ ໜ່ວຍງານກວດກາ, ການເປັນຜູ້ຕາງໜ້າ, ການທົບທວນຄືນທາງດ້ານບໍລິຫານ ແລະ ອີງການຄຸ້ມຄອງວຽກງານຖິ່ນກຳເນີດ ເພື່ອແນໃສ່ຜັນຂະຫຍາຍກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ຖິ່ນກຳເນີດ

ຖິ່ນກຳເນີດ ແມ່ນສັນຍາລັກທີ່ບົ່ງບອກທີ່ມາຂອງສິນຄ້າຈາກດິນແດນ, ເຂດ ຫຼື ທ້ອງຖິ່ນຂອງປະເທດໃດໜຶ່ງ ຊຶ່ງເປັນສິ່ງສຳຄັນພາໃຫ້ສິນຄ້າມີຄຸນນະພາບ ແລະ ມີຊື່ສຽງ ຫຼື ຄຸນລັກສະນະອື່ນທີ່ຕິດພັນກັບພູມສາດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ຢູ່ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຜູ້ດຳເນີນການ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງທີ່ມີສ່ວນຮ່ວມໃນຂະບວນການຜະລິດ, ຫຸ້ມຫໍ່, ເກັບຮັກສາ, ຂົນສົ່ງ, ສົ່ງອອກ, ຈັດຊື້ ແລະ ຈຳໜ່າຍສິນຄ້າຖິ່ນກຳເນີດ;

2. **ຜູ້ຮ້ອງຂໍ** ໝາຍເຖິງ ສະມາຄົມຖິ່ນກຳເນີດ ທີ່ໄດ້ຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ດັດ ແກ້ ຫຼື ຍົກເລີກການຈົດທະບຽນຖິ່ນກຳເນີດ. ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະຖືວ່າ ເປັນຜູ້ຮ້ອງຂໍໄດ້ ຖ້າຫາກສາມາດຢັ້ງຢືນຄວາມຖືກຕ້ອງຕາມເງື່ອນໄຂພິເສດ;

3. **ຄຳຮ້ອງ** ໝາຍເຖິງ ສຳນວນເອກະສານການຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ, ຄັດຄ້ານ, ປ່ຽນຊື່ ແລະ/ຫຼື ທີ່ຢູ່, ດັດແກ້ ຫຼື ຍົກເລີກ ການຈົດທະບຽນຖິ່ນກຳເນີດ;

4. **ເອກະສານຄຸນລັກສະນະສະເພາະຂອງຖິ່ນກຳເນີດ** ໝາຍເຖິງ ຂໍ້ມູນທີ່ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດສ້າງຂຶ້ນ ໂດຍລະບຸຂອບເຂດ, ທີ່ມາ, ວິທີ ແລະ ຂັ້ນຕອນການຜະລິດ, ຄຸນນະພາບ, ຊື່ສຽງ ຫຼື ລາຍລະອຽດຕ່າງໆຂອງຜະລິດຕະພັນ ທີ່ຕິດພັນກັບທີ່ມາ ແລະ ວິທີການກວດກາຄວາມສອດຄ່ອງກັບຄຸນລັກສະນະສະເພາະຂອງຖິ່ນກຳເນີດ;

5. **ຜູ້ຄັດຄ້ານ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດ ຫຼື ບຸກຄົນທີສາມທີ່ເປັນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຂໍຄັດຄ້ານຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ;

6. **ການຄັດຄ້ານ** ໝາຍເຖິງ ການຍື່ນຄຳສະເໜີຂໍຄັດຄ້ານໂດຍຜູ້ຄັດຄ້ານ ຕໍ່ການຮ້ອງຂໍຈົດທະບຽນຖິ່ນກຳເນີດທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນອຸດສາຫະກຳ;

7. **ຜູ້ຂໍຍົກເລີກ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດ ຫຼື ບຸກຄົນທີສາມ ທີ່ຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນຖິ່ນກຳເນີດ;

8. **ການຍົກເລີກ** ໝາຍເຖິງ ການຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນຖິ່ນກຳເນີດໂດຍຜູ້ຍົກເລີກ ທີ່ຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນຖິ່ນກຳເນີດ;

9. **ເຈົ້າຂອງຖິ່ນກຳເນີດ** ໝາຍເຖິງ ສະມາຄົມຖິ່ນກຳເນີດ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີເງື່ອນໄຂພິເສດ ທີ່ໄດ້ຈົດທະບຽນຖິ່ນກຳເນີດ;

10. **ສິນຄ້າຖິ່ນກຳເນີດ** ໝາຍເຖິງ ຜະລິດຕະພັນກະສິກຳ, ອາຫານ, ເຄື່ອງດື່ມ ແລະ ຫັດຖະກຳທີ່ຖືກຜະລິດ ຫຼື ແປຮູບໃນຂອບເຂດ ທີ່ກຳນົດເປັນຖິ່ນກຳເນີດ ທີ່ໄດ້ວາງຈຳໜ່າຍໃນຕະຫຼາດ;

11. **ການກວດກາ** ໝາຍເຖິງ ການກວດກາໂດຍເຈົ້າຂອງຖິ່ນກຳເນີດເອງ ແລະ ໜ່ວຍງານກວດກາອື່ນ ຫຼື ການຈັດຕັ້ງທີ່ໄດ້ຮັບມອບໝາຍໃຫ້ດຳເນີນການກວດກາ ເພື່ອຮັບປະກັນຄວາມສອດ ຄ່ອງກັບຄຸນລັກສະນະຂອງສິນຄ້າຖິ່ນກຳເນີດ;

12. **ການໃຈະ** ໝາຍເຖິງ ການດຳເນີນການໂດຍກົມຊັບສິນທາງປັນຍາ ຕໍ່ເຈົ້າຂອງຖິ່ນກຳເນີດ ເພື່ອໃຫ້ຢຸດການນຳໃຊ້ຖິ່ນກຳເນີດຊົ່ວຄາວ ໃນກໍລະນີທີ່ບໍ່ປະຕິບັດຕາມກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້;

13. **ປະເທດຕົ້ນກຳເນີດ** ໝາຍເຖິງ ປະເທດທີ່ເປັນສະຖານທີ່ຜະລິດສິນຄ້າຖິ່ນກຳເນີດ;

14. **ໃບມອບສິດ** ໝາຍເຖິງ ເອກະສານທີ່ເປັນລາຍລັກອັກສອນ ຊຶ່ງເຈົ້າຂອງສິດໄດ້ມອບສິດຂອງຕົນໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນ ປະຕິບັດໜ້າທີ່ແທນຕົນ;

15. **ຜູ້ມອບສິດ** ໝາຍເຖິງ ຜູ້ຖືສິດ ຫຼື ເຈົ້າຂອງສິດຖິ່ນກຳເນີດທີ່ມອບສິດຂອງຕົນ ໃຫ້ບຸກຄົນໜຶ່ງ ຫຼື ຫຼາຍຄົນປະຕິບັດໜ້າທີ່ແທນຕົນ ໃນການຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ດຳເນີນການອື່ນຢູ່ນຳກົມຊັບສິນທາງປັນຍາ;

16. **ຜູ້ຕາງໜ້າ** ໝາຍເຖິງ ທະນາຍຄວາມ ຫຼື ຕົວແທນ ທີ່ໄດ້ຮັບອະນຸຍາດຈາກເຈົ້າຂອງຖິ່ນກຳເນີດ ໃນການຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ດຳເນີນການອື່ນຢູ່ນຳກົມຊັບສິນທາງປັນຍາ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານຖິ່ນກຳເນີດ ຢູ່ ສປປ ລາວ.

## ໝວດທີ 2
## ການຈົດທະບຽນຖິ່ນກຳເນີດ

**ມາດຕາ 5 ເງື່ອນໄຂ ທີ່ສາມາດໄດ້ຮັບໃບຢັ້ງຢືນຖິ່ນກຳເນີດ**

ສິນຄ້າ ທີ່ສາມາດໄດ້ຮັບໃບຢັ້ງຢືນຖິ່ນກຳເນີດ ຕ້ອງມີເງື່ອນໄຂຄົບຖ້ວນດັ່ງນີ້:

1. ສິ່ງບົ່ງບອກໃຫ້ເຫັນທີ່ມາຂອງສິນຄ້າ ຈາກດິນແດນ, ເຂດ ຫຼື ທ້ອງຖິ່ນ ຂອງປະເທດໃດໜຶ່ງ;

2. ຖິ່ນກຳເນີດທາງພູມສາດ ເປັນສ່ວນສຳຄັນເຮັດໃຫ້ສິນຄ້າມີຄຸນນະພາບ ແລະ ຊື່ສຽງ ຫຼື ຄຸນລັກສະນະອື່ນ. ຄຸນນະພາບ ແລະ ຊື່ສຽງ ຫຼື ຄຸນລັກສະນະອື່ນນັ້ນ ແມ່ນອີງໃສ່ປັດໄຈທາງທຳມະຊາດ ທີ່ປະກອບດ້ວຍສະພາບຂອງດິນ, ອາກາດ, ນ້ຳ, ລະບົບນິເວດ, ເງື່ອນໄຂທຳມະຊາດ ແລະ ປັດໄຈມະນຸດ ລວມທັງຄວາມຊຳນິຊຳນານ ແລະ ປະສົບການຂອງຜູ້ຜະລິດ ແລະ ກຳມະວິທີການຜະລິດ ທີ່ມີມາແບບດັ້ງເດີມຂອງທ້ອງຖິ່ນນັ້ນ.

ສຳລັບຖິ່ນກຳເນີດທີ່ບໍ່ສາມາດຈົດທະບຽນ ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 6 ເງື່ອນໄຂຂອງຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດໃນ ສປປ ລາວ**

ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດໃນ ສປປ ລາວ ຕ້ອງມີສະຖານະເປັນສະມາຄົມຖິ່ນກຳເນີດ ແລະ ປະຕິບັດຕາມສິດ ແລະ ໜ້າທີ່ ທີ່ກຳນົດໄວ້ໃນມາດຕາ 29 ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະຖືວ່າ ເປັນຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດໄດ້ ຖ້າຫາກສາມາດຢັ້ງຢືນຄວາມຖືກຕ້ອງຕາມເງື່ອນໄຂພິເສດໃດໜຶ່ງ ດັ່ງນີ້:

1. ເປັນພຽງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດຽວເທົ່ານັ້ນ ທີ່ສົນໃຈຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ;

2. ມີຂອບເຂດການຜະລິດສິນຄ້າຖິ່ນກຳເນີດ ທີ່ປະກອບດ້ວຍຄຸນລັກສະນະແຕກຕ່າງ ຈາກພື້ນທີ່ໃກ້ຄຽງ ຫຼື ຄຸນລັກສະນະຂອງສິນຄ້າ ມີຄວາມແຕກຕ່າງຈາກສິນຄ້າທີ່ຜະລິດໃນພື້ນທີ່ໃກ້ຄຽງ.

ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດຈາກຕ່າງປະເທດ ທີ່ຕ້ອງການຂໍຈົດທະບຽນຖິ່ນກຳເນີດໃນ ສປປ ລາວ ຕ້ອງມີຫຼັກຖານຢັ້ງຢືນການປົກປ້ອງຖິ່ນກຳເນີດ ຢູ່ໃນປະເທດຕົ້ນກຳເນີດ.

**ມາດຕາ 7 ສຳນວນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ**

ສຳນວນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ສາມາດຍື່ນເປັນພາສາລາວ ຫຼື ພາສາອັງກິດກໍໄດ້ ຊຶ່ງປະກອບມີເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຕາມແບບພິມຂອງກົມຊັບສິນທາງປັນຍາ;

2. ໃບມອບສິດ ທີ່ເປັນຕົ້ນສະບັບ ໃນກໍລະນີ ທີ່ຍື່ນຄໍາຮ້ອງຜ່ານຜູ້ຕາງໜ້າ;

3. ຮູບຂອງຖິ່ນກໍາເນີດທີ່ຈະແຈ້ງ;

4. ບົດລາຍງານ ກ່ຽວກັບຂົງເຂດພູມສາດ ທີ່ຈະນໍາໃຊ້ເປັນຖິ່ນກໍາເນີດ;

5. ສິນຄ້າທີ່ກ່ຽວຂ້ອງກັບຖິ່ນກໍາເນີດ ແລະ ວິທີການກວດກາທີ່ຈະນໍາໃຊ້;

6. ບົດລາຍງານ ກ່ຽວກັບຈຸດເດັ່ນຂອງຖິ່ນກໍາເນີດ ຊຶ່ງຜູ້ຮ້ອງຂໍຈົດທະບຽນຖິ່ນກໍາເນີດສະເໜີໃຫ້ເປັນຖິ່ນກໍາເນີດ ແລະ ຫຼັກຖານ ເພື່ອສະໜັບສະໜູນບົດລາຍງານນັ້ນ;

7. ຫຼັກຖານຢັ້ງຢືນການປົກປ້ອງຖິ່ນກໍາເນີດ ຢູ່ໃນປະເທດຕົ້ນກໍາເນີດ ໃນກໍລະນີທີ່ຄໍາຮ້ອງຂໍຈົດທະບຽນນັ້ນ ໄດ້ອີງໃສ່ການປົກປ້ອງຢູ່ຕ່າງປະເທດ;

8. ໃບຮັບເງິນຄ່າທໍານຽມ ແລະ ຄ່າບໍລິການ.

ສໍານວນຄໍາຮ້ອງຂໍຈົດທະບຽນຖິ່ນກໍາເນີດ ແລະ ເອກະສານຄັດຕິດອື່ນໆ ທີ່ຍື່ນເປັນພາສາອັງກິດ, ຕ້ອງແປເປັນພາສາລາວ (ຍົກເວັ້ນ ຊື່, ທີ່ຢູ່ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ຄໍາສັບທາງດ້ານວິຊາການ) ພາຍໃນ ເກົ້າສິບ ວັນ ຫຼັງຈາກທີ່ໄດ້ຍື່ນຄໍາຮ້ອງ ຊຶ່ງການແປດັ່ງກ່າວ ຕ້ອງໄດ້ຮັບການຢັ້ງຢືນຈາກບໍລິສັດແປພາສາທີ່ຖືກຕ້ອງຕາມກົດໝາຍ. ຖ້າບໍ່ປະຕິບັດຕາມເງື່ອນໄຂດັ່ງກ່າວ ຄໍາຮ້ອງຈະບໍ່ຖືກນໍາມາພິຈາລະນາ ແລະ ຖືວ່າສະຫຼະສິດ.

ໃນກໍລະນີຊື່ຖິ່ນກໍາເນີດໃດໜຶ່ງ ຫາກບໍ່ເປັນພາສາອັງກິດຕ້ອງໄດ້ແປເປັນພາສາລາວ ຫຼື ຕີຄວາມໝາຍ ແລະ ການອ່ານອອກສຽງຂອງຊື່ຖິ່ນກໍາເນີດນັ້ນ.

**ມາດຕາ 8 ເອກະສານຄຸນລັກສະນະສະເພາະຂອງຖິ່ນກໍາເນີດ**

ເອກະສານຄຸນລັກສະນະສະເພາະຂອງຖິ່ນກໍາເນີດ ແມ່ນເນື້ອໃນທີ່ໄດ້ກໍານົດໄວ້ໃນຂໍ້ 3, 4, 5 ແລະ 6 ໃນມາດຕາ 7 ຂອງຂໍ້ຕົກລົງ ສະບັບນີ້ ແລະ ຕ້ອງມີຂໍ້ມູນດັ່ງນີ້:

1. ຊື່ຖິ່ນກໍາເນີດທີ່ຂໍປົກປ້ອງ ຊຶ່ງເປັນຊື່ທີ່ນໍາໃຊ້ໃນທາງການຄ້າ ຫຼື ເປັນທີ່ຮູ້ຈັກມາກ່ອນແລ້ວ;
2. ຄໍາອະທິບາຍ ກ່ຽວກັບສິນຄ້າທີ່ຮ້ອງຂໍຈົດທະບຽນຖິ່ນກໍາເນີດ ຊຶ່ງລວມມີວັດຖຸດິບ, ຮູບຮ່າງ ລວມທັງ ຄຸນລັກສະນະທາງເຄມີ, ສ່ວນປະກອບຂອງຈຸລິນຊີ ຫຼື ລົດຊາດສະເພາະຂອງສິນຄ້າຖິ່ນກໍາເນີດ (ຖ້າມີ);
3. ຄໍາອະທິບາຍ ກ່ຽວກັບພື້ນທີ່ທາງພູມສາດທີ່ໄດ້ກໍານົດ ຊຶ່ງມີຄວາມກ່ຽວພັນຕາມທີ່ໄດ້ລະບຸໄວ້ໃນຂໍ້ທີ 6 ຂອງມາດຕານີ້;
4. ຫຼັກຖານທີ່ບົ່ງບອກວ່າສິນຄ້າມີຕົ້ນກໍາເນີດມາຈາກພື້ນທີ່ ທີ່ໄດ້ກໍານົດເປັນຖິ່ນກໍາເນີດ;
5. ຄໍາອະທິບາຍກ່ຽວກັບວິທີ ແລະ ຂັ້ນຕອນການຜະລິດສິນຄ້າ ທີ່ນໍາໃຊ້ຖິ່ນກໍາເນີດ;
6. ລາຍລະອຽດ ກ່ຽວກັບຄວາມກ່ຽວພັນລະຫວ່າງຄຸນນະພາບ, ຊື່ສຽງ ຫຼື ລາຍລະອຽດຕ່າງໆຂອງສິນຄ້າກັບ ແຫຼ່ງທີ່ມາທາງພູມສາດ;
7. ຊື່ ແລະ ທີ່ຢູ່ຂອງໜ່ວຍງານກວດກາ;
8. ສິນຄ້າທີ່ກ່ຽວຂ້ອງກັບຖິ່ນກໍາເນີດ ແລະ ວິທີການກວດກາ;
9. ລະບຽບການ ກ່ຽວກັບການຕິດກາໝາຍຖິ່ນກໍາເນີດແຫ່ງຊາດໃສ່ສິນຄ້າ.

### ມາດຕາ 9 ຂັ້ນຕອນການຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ

ຜູ້ຮ້ອງຂໍ ສາມາດຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ຄຳສະເໜີຂໍຕໍ່ເວລາ ຢູ່ກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ ຕາມແບບພິມຂອງກົມຊັບສິນທາງປັນຍາ ໂດຍປະຕິບັດຕາມເງື່ອນໄຂຕໍ່າສຸດ ທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

ກົມຊັບສິນທາງປັນຍາ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງລຸ່ມນີ້:

1. ຮັບຄຳຮ້ອງ, ໃຫ້ເລກທີ ແລະ ວັນທີຍື່ນຄຳຮ້ອງ ແລະ ອອກໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ ໃນກໍລະນີຄຳຮ້ອງຫາກສອດຄ່ອງຕາມເງື່ອນໄຂຕໍ່າສຸດ ຕາມທີ່ກຳນົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້;

2. ໃນກໍລະນີ ຜູ້ຮ້ອງຂໍຈົດທະບຽນ ຫາກມີຈຸດປະສົງຂໍຖອນຄຳຮ້ອງ ຫຼື ຄຳຮ້ອງຖືກສະຫຼະສິດ ຫຼື ຖືກປະຕິເສດ ຈະບໍ່ມີການສົ່ງຄືນຄ່າທຳນຽມ ແລະ ຄ່າບໍລິການທີ່ໄດ້ຈ່າຍໄປແລ້ວ.

### ມາດຕາ 10 ເງື່ອນໄຂຕໍ່າສຸດໃນການໄດ້ຮັບວັນທີຍື່ນຄຳຮ້ອງ

ຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດທີ່ມີເງື່ອນໄຂຕໍ່າສຸດ ທີ່ຈະໄດ້ຮັບວັນທີຍື່ນຄຳຮ້ອງ ຕ້ອງປະກອບດ້ວຍເອກະສານຢ່າງໜ້ອຍທີ່ສຸດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 1, 3, 5 ແລະ 8 ຂອງມາດຕາ 7 ຂອງຂໍ້ຕົກລົງສະບັບນີ້. ນອກຈາກນັ້ນ ຍັງຕ້ອງມີໃບມອບສິດທີ່ລະບຸຊື່ ແລະ ທີ່ຢູ່ຂອງຜູ້ຕາງໜ້າ ໃນກໍລະນີທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ.

ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ຕ້ອງສະໜອງເອກະສານເພີ່ມເຕີມ ຫຼື ດັດແກ້ໃຫ້ໄດ້ຕາມເງື່ອນໄຂຄົບຖ້ວນຕາມທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ພາຍໃນ ຫົກສິບ ວັນນັບແຕ່ວັນອອກແຈ້ງການເປັນຕົ້ນໄປ; ຖ້າບໍ່ດັ່ງນັ້ນ, ໃຫ້ຖືວ່າສະຫຼະສິດ.

### ມາດຕາ 11 ຖິ່ນກຳເນີດທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນ

ຖິ່ນກຳເນີດ ທີ່ສາມາດໄດ້ຮັບການຈົດທະບຽນ ຕ້ອງມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ແລະ ສອດຄ່ອງກັບມາດຕາ 25 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

### ມາດຕາ 12 ການກວດສອບເບື້ອງຕົ້ນ

ພາຍຫຼັງຮັບຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດແລ້ວ ກົມຊັບສິນທາງປັນຍາ ຕ້ອງດຳເນີນການກວດສອບກ່ຽວກັບຄວາມຄົບຖ້ວນ, ຄວາມຖືກຕ້ອງ ແລະ ຄວາມສອດຄ່ອງ ຂອງສຳນວນຄຳຮ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 35 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ມາດຕາ 5, 6, 7 ແລະ 10 ຂອງຂໍ້ຕົກລົງສະບັບນີ້. ການກວດສອບເບື້ອງຕົ້ນ ຕ້ອງໃຫ້ສຳເລັດພາຍໃນເວລາ ຫົກສິບ ວັນ ນັບແຕ່ວັນຮັບສຳນວນຄຳຮ້ອງຄົບຖ້ວນເປັນຕົ້ນໄປ.

ກໍລະນີ ສຳນວນຄຳຮ້ອງຫາກ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 7 ແລະ 8 ຂອງຂໍ້ຕົກລົງສະບັບນີ້, ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດຊາບ ພາຍໃນ ສາມ ວັນລັດຖະການ, ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດຕ້ອງຕອບສະໜອງເອກະສານ ຫຼື ດັດແກ້ ໃຫ້ໄດ້ຕາມເງື່ອນໄຂດັ່ງກ່າວ ພາຍໃນ ສິບສອງ ວັນລັດຖະການ ນັບແຕ່ມື້ອອກແຈ້ງການຂອງກົມເປັນຕົ້ນໄປ.

ໃນກໍລະນີ ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດຫາກບໍ່ສາມາດປະຕິບັດພາຍໃນກຳນົດເວລາດັ່ງກ່າວ, ກົມຊັບສິນທາງປັນຍາ ຈະແຈ້ງເປັນລາຍລັກອັກສອນ ຫຼື ແຈ້ງຜ່ານທາງເອເລັກໂຕຣນິກ ໃຫ້ຜູ້ຮ້ອງຂໍຊາບວ່າ ຄຳຮ້ອງດັ່ງກ່າວຈະບໍ່ຖືກພິຈາລະນາ ແລະ ຖືວ່າສະຫຼະສິດ ແລະ ໃຫ້ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດຊາບ.

ໃນກໍລະນີ ສຳນວນຄຳຮ້ອງ ຫາກສອດຄ່ອງຕາມເງື່ອນໄຂການກວດສອບເບື້ອງຕົ້ນ ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 13 ການເຜີຍແຜ່ຄຳຮ້ອງ ແລະ ການສະເໜີຂໍຄັດຄ້ານ**

ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ພາຍຫຼັງສຳເລັດການກວດສອບເບື້ອງຕົ້ນ ພາຍໃນ ສິບຫ້າ ວັນ ການເຜີຍແຜ່ສຳນວນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຕ້ອງປະກອບມີຂໍ້ມູນ ດັ່ງລຸ່ມນີ້:

1. ຊື່ຖິ່ນກຳເນີດ ທີ່ຂໍຈົດທະບຽນ;
2. ເລກທີ ແລະ ວັນທີຍື່ນຄຳຮ້ອງ;
3. ຊື່ ແລະ ທີ່ຢູ່ ຂອງຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ;
4. ສິນຄ້າທີ່ ຈະນຳໃຊ້ຖິ່ນກຳເນີດ;
5. ລາຍລະອຽດ ກ່ຽວກັບຄຸນນະພາບ, ຊື່ສຽງ ຫຼື ຄຸນລັກສະນະສະເພາະຂອງສິນຄ້າຖິ່ນກຳເນີດ;
6. ລາຍລະອຽດ ກ່ຽວກັບຄວາມກ່ຽວພັນລະຫວ່າງ ຄຸນນະພາບ, ຊື່ສຽງ ຫຼື ຄຸນລັກສະນະສະເພາະຂອງສິນຄ້າ ກັບແຫຼ່ງທີ່ມາທາງພູມສາດ;
7. ລາຍລະອຽດກ່ຽວກັບທີ່ຕັ້ງທາງພູມສາດ ແລະ ແຜນທີ່ຂອງຖິ່ນກຳເນີດ ທີ່ຂໍຈົດທະບຽນ.

ບຸກຄົນທີສາມ ສາມາດສະເໜີຄັດຄ້ານຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດຢູ່ກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ພາຍໃນເວລາ ຫົກສິບ ວັນ ນັບແຕ່ວັນທີທີ່ໄດ້ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ໂດຍປະກອບຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 14 ການກວດສອບເນື້ອໃນ**

ກົມຊັບສິນທາງປັນຍາ ຕ້ອງດຳເນີນການກວດສອບເນື້ອໃນໂດຍອີງຕາມລະບົບຖານຂໍ້ມູນ ຂອງກົມຊັບສິນທາງປັນຍາ (IPAS) ແລະ ສາກົນ (WIPO Global Design Data Base) ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 40 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ເພື່ອພິຈາລະນາຄຳຮ້ອງນັ້ນ ໃຫ້ສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນ 18 ແລະ 25 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງອອກແຈ້ງການ ໃຫ້ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດຊາບ ກ່ຽວກັບການປະຕິເສດເບື້ອງຕົ້ນການຈົດທະບຽນຖິ່ນກຳເນີດ ໃນກໍລະນີສຳນວນຄຳຮ້ອງດັ່ງກ່າວຫາກບໍ່ສອດຄ່ອງຕາມເງື່ອນໄຂການຈົດທະບຽນ.

ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ຕ້ອງສະໜອງເອກະສານ, ຂໍ້ມູນ, ຫຼັກຖານ, ຫຼື ຄຳຊີ້ແຈງ ຫຼື  ຄຳໂຕ້ແຍ້ງ ໃຫ້ກົມຊັບສິນທາງປັນຍາ ພາຍໃນໄລຍະເວລາ ຫົກສິບ ວັນ ນັບແຕ່ວັນທີໄດ້ອອກແຈ້ງການປະຕິເສດເບື້ອງຕົ້ນໄປ. ໃນກໍລະນີ  ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ມີເຫດຜົນພຽງພໍ ໂດຍແຈ້ງເປັນລາຍລັກອັກສອນ, ກົມຊັບສິນທາງປັນຍາ ສາມາດຕໍ່ເວລາໃຫ້ຕື່ມອີກ ສາມສິບ ວັນ ນັບແຕ່ວັນສິ້ນສຸດແຈ້ງການຄັ້ງທຳອິດເປັນຕົ້ນໄປ; ຖ້າບໍ່ດັ່ງນັ້ນ, ໃຫ້ຖືວ່າສະຫຼະສິດ. ພາຍຫຼັງທີ່ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດສະໜອງເອກະສານ, ຂໍ້ມູນ ແລະ ຫຼັກຖານ ຫຼື ຄຳຊີ້ແຈງ ຫຼື ຄຳໂຕ້ແຍ້ງ ໃຫ້ກົມຊັບສິນທາງປັນຍາແລ້ວ ແຕ່ເຫັນວ່າຍັງບໍ່ພຽງພໍ ກົມຊັບສິນທາງປັນຍາ ສາມາດຮຽກເອົາຂໍ້ມູນເພີ່ມເຕີມຈາກຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ.

ສຳລັບຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດຈາກຕ່າງປະເທດ ກົມຊັບສິນທາງປັນຍາ ຕ້ອງກວດສອບຄວາມຖືກຕ້ອງຂອງຫຼັກຖານຢັ້ງຢືນການປົກປ້ອງຖິ່ນກຳເນີດ ຢູ່ໃນປະເທດຕົ້ນກຳເນີດ ແລະ ສອດຄ່ອງກັບເງື່ອນໄຂຕາມທີ່ກຳນົດໃວ້ໃນມາດຕາ 25 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

**ມາດຕາ 15 ການດັດແກ້ຄຳຮ້ອງ**

ໃນໄລຍະການກວດສອບ ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ສາມາດດັດແກ້ຄຳຮ້ອງໄດ້, ແຕ່ຕ້ອງດຳເນີນກ່ອນການຈົດທະບຽນ, ການສະຫຼະສິດ, ການປະຕິເສດ ຫຼື ການສິ້ນສຸດການພິຈາລະນາອື່ນ ຂອງຄຳຮ້ອງດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ໂດຍບໍ່ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຊຶ່ງການດັດແກ້ຄຳຮ້ອງນັ້ນ ຕ້ອງບໍ່ແມ່ນການດັດແກ້ດັ່ງຕໍ່ໄປນີ້:

1. ການລະບຸເອົາສິນຄ້າໃໝ່ເຂົ້າໃນຄຳຮ້ອງ;
2. ປັບປຸງຄຸນລັກສະນະສຳຄັນ ຫຼື ລັກສະນະສະເພາະຂອງສິນຄ້າ;
3. ປ່ຽນແປງຄວາມກ່ຽວພັນຕາມທີ່ໄດ້ລະບຸໄວ້ໃນຂໍ້ 6 ຂອງມາດຕາ 8 ຂອງຂໍ້ຕົກລົງສະບັບນີ້;
4. ປ່ຽນແປງຊື່ ຫຼື ສ່ວນໃດໜຶ່ງຂອງຊື່ສິນຄ້າ;
5. ການດັດແກ້ທີ່ຈະສົ່ງຜົນກະທົບຕໍ່ຂອບເຂດພື້ນທີ່ທີ່ຖືກກຳນົດເປັນຖິ່ນກຳເນີດ.

**ມາດຕາ 16 ການຈົດທະບຽນຖິ່ນກຳເນີດ**

ກົມຊັບສິນທາງປັນຍາ ຕ້ອງອອກໃບຢັ້ງຢືນການຈົດທະບຽນຖິ່ນກຳເນີດ, ບັນທຶກຂໍ້ມູນທີ່ກ່ຽວຂ້ອງລົງໃນປຶ້ມບັນທຶກການຈົດທະບຽນ ແລະ ລະບົບຖານຂໍ້ມູນຂອງກົມຊັບສິນທາງປັນຍາ ໃນເມື່ອສຳນວນຄຳຮ້ອງສອດຄ່ອງຕາມເງື່ອນໄຂການຈົດທະບຽນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 17 ການເຜີຍແຜ່ຜົນຂອງການຈົດທະບຽນຖິ່ນກຳເນີດ**

ພາຍຫຼັງການຈົດທະບຽນຖິ່ນກຳເນີດແລ້ວ ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຜົນຂອງການຈົດທະບຽນຖິ່ນກຳເນີດ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ສາມາດສະເໜີເຖິງ ກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ ເພື່ອດັດແກ້ຂໍ້ຜິດພາດ ແລະ ເຜີຍແຜ່ຄືນໃໝ່ຂໍ້ມູນທີ່ຖືກຕ້ອງ ໂດຍບໍ່ຕ້ອງຈ່າຍຄ່າບໍລິການ ພາຍໃນຫົກສິບ ວັນ ນັບແຕ່ວັນເຜີຍແຜ່ຄັ້ງທຳອິດ.

## ໝວດທີ 3
## ການດຳເນີນການຫຼັງການຈົດທະບຽນຖິ່ນກຳເນີດ

**ມາດຕາ 18 ການປ່ຽນແປງຂໍ້ມູນ ຫຼັງການຈົດທະບຽນຖິ່ນກຳເນີດ**

ເຈົ້າຂອງຖິ່ນກຳເນີດ ສາມາດຍື່ນຄຳຮ້ອງຢູ່ນຳກົມຊັບສິນທາງປັນຍາ ເພື່ອປ່ຽນແປງຂໍ້ມູນກ່ຽວກັບ ຊື່, ທີ່ຢູ່ ຫຼື ຊື່ ແລະ ທີ່ຢູ່ຂອງເຈົ້າຂອງຖິ່ນກຳເນີດ ຫຼື ຜູ້ຕາງໜ້າ ຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກທຸກການປ່ຽນແປງລົງໃນຖານຂໍ້ມູນຂອງກົມຊັບສິນທາງປັນຍາ, ແລະ ເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 19 ການຂໍສຳເນົາໃບຢັ້ງຢືນການຈົດທະບຽນຖິ່ນກຳເນີດ**

ເຈົ້າຂອງຖິ່ນກຳເນີດ ສາມາດຂໍສຳເນົາໃບຢັ້ງຢືນການຈົດທະບຽນຖິ່ນກຳເນີດ ໄດ້ ເພື່ອນຳໃຊ້ເປັນຫຼັກຖານໃນການດຳເນີນຄະດີຢູ່ສານປະຊາຊົນ, ການຈົດທະບຽນຖິ່ນກຳເນີດຢູ່ຕ່າງປະເທດ ແລະ ໃຊ້ແທນໃບຢັ້ງຢືນການຈົດທະບຽນທີ່ເສຍຫາຍ ຫຼື ຊອກບໍ່ເຫັນ ຊຶ່ງເຈົ້າຂອງຖິ່ນກຳເນີດທີ່ໄດ້ຮັບການຈົດທະບຽນ ຢູ່ກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ ຕ້ອງຍື່ນຄຳຮ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

**ມາດຕາ 20 ການດັດແກ້ພາຍຫຼັງການຈົດທະບຽນຖິ່ນກຳເນີດ**

ພາຍຫຼັງຖິ່ນກຳເນີດ ໄດ້ຮັບການຈົດທະບຽນແລ້ວ, ເຈົ້າຂອງຖິ່ນກຳເນີດ ສາມາດຍື່ນຄຳຮ້ອງຂໍດັດແກ້ຂໍ້ມູນບາງສ່ວນຢູ່ໃນເອກະສານຄຸນລັກສະນະສະເພາະຂອງຖິ່ນກຳເນີດ ຫຼື ດັດແກ້ບາງຂໍ້ຜິດພາດໃນສຳນວນຄຳຮ້ອງຂໍຈົດທະບຽນ ໂດຍຍື່ນຄຳຮ້ອງຕາມແບບພິມຂອງກົມຊັບສິນທາງປັນຍາ ຫຼື ຜ່ານທາງເອເລັກໂຕຣນິກ ພ້ອມທັງຈ່າຍຄ່າບໍລິການ, ການດັດແກ້ດັ່ງກ່າວ ແມ່ນອະນຸຍາດໃຫ້ດັດແກ້ໄດ້ພຽງສ່ວນໜ້ອຍ.

ໃນກໍລະນີ ທີ່ການສະເໜີຂໍດັດແກ້ກ່ຽວຂ້ອງກັບການປ່ຽນແປງໜຶ່ງ ຫຼື ຫຼາຍລາຍການ ໃນເອກະສານຄຸນລັກສະນະສະເພາະຂອງຖິ່ນກຳເນີດ ໃຫ້ຖືວ່າບໍ່ແມ່ນການດັດແກ້ພຽງສ່ວນໜ້ອຍ. ຖ້າຫາກກົມຊັບສິນທາງປັນຍາ ບໍ່ເຫັນດີຕໍ່ການສະເໜີຂໍດັດແກ້ດັ່ງກ່າວ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດນັ້ນ ຍື່ນຄຳຮ້ອງມາໃໝ່ ແລະ ໃຫ້ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນໝວດ 2 ຂອງຂໍ້ຕົກລົງສະບັບນີ້.

ການດັດແກ້ທີ່ບໍ່ຖືວ່າແມ່ນການດັດແກ້ພຽງສ່ວນໜ້ອຍ ແມ່ນການດັດແກ້ລາຍການດັ່ງລຸ່ມນີ້:

1. ກ່ຽວຂ້ອງກັບຄຸນລັກສະນະທີ່ສຳຄັນຂອງສິນຄ້າຖິ່ນກຳເນີດ;
2. ຄວາມກ່ຽວພັນລະຫວ່າງຄຸນນະພາບ, ຊື່ສຽງ ຫຼື ລາຍລະອຽດຕ່າງໆຂອງ ສິນຄ້າຖິ່ນກຳເນີດ;
3. ກ່ຽວກັບຊື່ ຫຼື ສ່ວນໃດໜຶ່ງຂອງຊື່ສິນຄ້າ;
4. ເຮັດໃຫ້ມີການປ່ຽນແປງຂອບເຂດທີ່ໄດ້ກຳນົດເປັນຖິ່ນກຳເນີດ.

ໃນກໍລະນີ ການດັດແກ້ໃບຢັ້ງຢືນການຈົດທະບຽນຖິ່ນກຳເນີດທີ່ມີຂໍ້ຜິດພາດ ຊຶ່ງເກີດຈາກກົມຊັບສິນທາງປັນຍາ ແມ່ນຜູ້ຮ້ອງຂໍຈະບໍ່ໄດ້ຈ່າຍຄ່າບໍລິການ. ກົມຊັບສິນທາງປັນຍາ ຕ້ອງເຜີຍແຜ່ຂໍ້ມູນກ່ຽວກັບການດັດແກ້ດັ່ງກ່າວລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 21 ການຍົກເລີກການຈົດທະບຽນຖິ່ນກຳເນີດ**

ບຸກຄົນທີສາມ ມີສິດຍື່ນຄຳສະເໜີຂໍຍົກເລີກການຈົດທະບຽນຖິ່ນກຳເນີດ ພາຍໃນໄລຍະເວລາຫ້າ ປີ ນັບແຕ່ວັນເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ ເປັນຕົ້ນໄປ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 44 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ. ການຍື່ນຄຳຮ້ອງຂໍຍົກເລີກການຈົດທະບຽນຖິ່ນກຳເນີດ ໃຫ້ປະຕິບັດຕາມແບບພິມຂອງກົມຊັບສິນທາງປັນຍາ ພ້ອມທັງຈ່າຍຄ່າບໍລິການ.

ກົມຊັບສິນທາງປັນຍາ ມີສິດຍົກເລີກການຈົດທະບຽນຖິ່ນກຳເນີດ ທີ່ໄດ້ຮັບການປົກປ້ອງຕາມການພິຈາລະນາຂອງກົມ ຫຼື ຕາມການສະເໜີຂອງບຸກຄົນທີສາມໃນກໍລະນີໃດໜຶ່ງ ດັ່ງລຸ່ມນີ້:

1. ບໍ່ສາມາດປະຕິບັດຕາມຂໍ້ກຳນົດຂອງເອກະສານຄຸນລັກສະນະສະເພາະຂອງຖິ່ນກຳເນີດ;
2. ບໍ່ມີສິນຄ້າຖິ່ນກຳເນີດຈຳໜ່າຍໃນທ້ອງຕະຫຼາດເປັນເວລາຕໍ່າສຸດ ເຈັດ ປີ ນັບແຕ່ວັນເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາເປັນຕົ້ນໄປ;
3. ມີຫຼັກຖານພຽງພໍທີ່ເຮັດໃຫ້ເຊື່ອວ່າ ເຈົ້າຂອງຖິ່ນກຳເນີດ ທີ່ໄດ້ຮັບການຈົດທະບຽນ ບໍ່ແມ່ນເຈົ້າຂອງທີ່ແທ້ຈິງ;
4. ສຳລັບຖິ່ນກຳເນີດຕ່າງປະເທດ ທີ່ບໍ່ໄດ້ຮັບການປົກປ້ອງ ຫຼື ສິ້ນສຸດການປົກປ້ອງ ໃນປະເທດຕົ້ນກຳເນີດ ຫຼື ຢຸດນຳໃຊ້ໃນປະເທດນັ້ນ;

ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ເຈົ້າຂອງຖິ່ນກຳເນີດຊາບ ໃນເມື່ອໄດ້ຮັບຄຳສະເໜີຂໍຍົກເລີກຈາກບຸກຄົນທີສາມ.

ເຈົ້າຂອງຖິ່ນກຳເນີດສາມາດຍື່ນຄຳຊີ້ແຈງ ເຖິງກົມຊັບສິນທາງປັນຍາ ພາຍໃນເວລາ ຫົກສິບ ວັນ ນັບແຕ່ວັນທີອອກແຈ້ງການຂອງກົມເປັນຕົ້ນໄປ.

ໃນກໍລະນີ ເຈົ້າຂອງຖິ່ນກຳເນີດ ຫາກບໍ່ມີຄຳຊີ້ແຈງໃດໆ ໃຫ້ຖືວ່າ ເຈົ້າຂອງຖິ່ນກຳເນີດນັ້ນ ຍິນຍອມຕໍ່ຄຳສະເໜີຂໍຍົກເລີກການຈົດທະບຽນຖິ່ນກຳເນີດຂອງຕົນ. ກົມຊັບສິນທາງປັນຍາ ຕ້ອງອອກໜັງສືຍົກເລີກຖິ່ນກຳເນີດ ແລະ ແຈ້ງໃຫ້ເຈົ້າຂອງຖິ່ນກຳເນີດຊາບ.

ກົມຊັບສິນທາງປັນຍາ ຕ້ອງຍົກເລີກການຈົດທະບຽນຖິ່ນກຳເນີດ ໃນກໍລະນີທີ່ ບຸກຄົນທີສາມຫາກມີການຮ້ອງຟ້ອງຕໍ່ສານປະຊາຊົນ ແລະ ມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ມີການຍົກເລີກການຈົດທະບຽນຖິ່ນກຳເນີດດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 139 ຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງແຈ້ງຜົນການຍົກເລີກໃບຢັ້ງຢືນການຈົດທະບຽນຖິ່ນກຳເນີດ ໃຫ້ເຈົ້າຂອງຖິ່ນກຳເນີດ ແລະ ບຸກຄົນທີ່ຮ້ອງຂໍຍົກເລີກເພື່ອຊາບ.

ກົມຊັບສິນທາງປັນຍາ ຕ້ອງບັນທຶກລົງໃນຖານຂໍ້ມູນ ແລະ ເຜີຍແຜ່ການຍົກເລີກດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບຊັບສິນທາງປັນຍາ.

**ມາດຕາ 22 ອາຍຸການປົກປ້ອງ**

ອາຍຸການປົກປ້ອງຖິ່ນກຳເນີດ ມີຕະຫຼອດໄປ ນັບແຕ່ວັນຍື່ນຄຳຮ້ອງຂໍຈົດທະບຽນເປັນຕົ້ນໄປ ໂດຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ເທື່ອດຽວ.

**ມາດຕາ 23 ການສ້າງສຳນວນເອກະສານຂຶ້ນໃໝ່**

ກົມຊັບສິນທາງປັນຍາ ຕ້ອງແຈ້ງໃຫ້ຜູ້ຍື່ນຄຳຮ້ອງ ຫຼື ເຈົ້າຂອງສຳນວນເອກະສານ ສົ່ງສຳເນົາເອກະສານທີ່ກ່ຽວຂ້ອງ ຫຼື ເອກະສານທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ ພ້ອມທັງຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງສຳເນົາດັ່ງກ່າວ ລວມທັງເອກະສານ ຫຼື ສຳນວນເອກະສານທີ່ກ່ຽວຂ້ອງ ທີ່ໄດ້ຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

ກົມຊັບສິນທາງປັນຍາ ຕ້ອງສ້າງສຳເນົາສຳນວນເອກະສານ ຫຼື ເອກະສານອື່ນໆທີ່ເສຍຫາຍ ຫຼື ສູນຫາຍນັ້ນຂຶ້ນມາໃໝ່.

## ໝວດທີ 4
## ກາໝາຍຖິ່ນກຳເນີດແຫ່ງຊາດ

**ມາດຕາ 24 ກາໝາຍຖິ່ນກຳເນີດແຫ່ງຊາດ**

ກາໝາຍຖິ່ນກຳເນີດແຫ່ງຊາດ ແມ່ນກາໝາຍທີ່ສ້າງຂຶ້ນ ແລະ ຄຸ້ມຄອງໂດຍກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອຢັ້ງຢືນສິນຄ້າຖິ່ນກຳເນີດທີ່ໄດ້ຮັບການຈົດທະບຽນແລ້ວ. ກົມຊັບສິນທາງປັນຍາ ຕ້ອງອອກໃບອະນຸຍາດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ໃຫ້ແກ່ເຈົ້າຂອງຖິ່ນກຳເນີດ ທີ່ປະຕິບັດຕາມເງື່ອນໄຂຂອງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 25 ສິດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ**

ເຈົ້າຂອງຖິ່ນກຳເນີດ ມີສິດຄຸ້ມຄອງ, ນຳໃຊ້, ຜະລິດ ຫຼື ອະນຸຍາດໃຫ້ສະມາຊິກ ຂອງເຈົ້າຂອງຖິ່ນກຳເນີດ ນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ເພື່ອຕິດໃສ່ສະຫຼາກສິນຄ້າຖິ່ນກຳເນີດ ທີ່ໄດ້ຮັບການຈົດທະບຽນ.

ເຈົ້າຂອງຖິ່ນກຳເນີດຕ້ອງອອກຂໍ້ກຳນົດ ກ່ຽວກັບການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດຂອງສະມາຊິກ.

**ມາດຕາ 26 ການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ**

ສະມາຊິກເຈົ້າຂອງຖິ່ນກຳເນີດ ທີ່ມີຈຸດປະສົງນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 22 ຂອງຂໍ້ຕົກລົງສະບັບນີ້ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດເຖິງເຈົ້າຂອງຖິ່ນກຳເນີດ. ເຈົ້າຂອງຖິ່ນກຳເນີດ ຕ້ອງອອກໃບອະນຸຍາດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດໃຫ້ສະມາຊິກຂອງຕົນ ຜູ້ທີ່ສາມາດປະຕິບັດຕາມເງື່ອນໄຂການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ.

ສະມາຊິກທີ່ໄດ້ຮັບອະນຸຍາດ ໃຫ້ນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ຕ້ອງຕິດກາໝາຍຖິ່ນກຳເນີດແຫ່ງຊາດ ໃສ່ສະຫຼາກສິນຄ້າຂອງຕົນ. ນອກນັ້ນ, ຄຳວ່າ ຖິ່ນກຳເນີດທີ່ໄດ້ຮັບການປົກປ້ອງ ຫຼື ຂຽນເປັນຕົວຫຍໍ້ເປັນອັກສອນລາແຕັງ '*PGI*' ກໍ່ສາມາດຕິດໃສ່ສະຫຼາກໄດ້.

**ມາດຕາ 27 ການຄຸ້ມຄອງກາໝາຍຖິ່ນກຳເນີດແຫ່ງຊາດ**

ກົມຊັບສິນທາງປັນຍາ ຕ້ອງຄຸ້ມຄອງບັນຊີລາຍຊື່ຂອງເຈົ້າຂອງຖິ່ນກຳເນີດ ທີ່ໄດ້ຮັບໃບຢັ້ງຢືນນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ເພື່ອເປັນຂໍ້ມູນໃຫ້ແກ່ບຸກຄົນທີ່ສົນໃຈ.

ກົມຊັບສິນທາງປັນຍາ ມີສິດຮຽກເຈົ້າຂອງຖິ່ນກຳເນີດມາຊີ້ແຈງ ຫຼື ສະໜອງຂໍ້ມູນ ຫຼື ເອກະສານ ຫຼື ຫຼັກຖານອື່ນໆ ທີ່ຈຳເປັນໃນກໍລະນີສະມາຊິກທີ່ໄດ້ຮັບອະນຸຍາດໃຫ້ນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ຈາກເຈົ້າຂອງຖິ່ນກຳເນີດຫາກບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້. ກົມຊັບສິນທາງປັນຍາ ມີສິດນຳໃຊ້ມາດຕະການທາງດ້ານບໍລິຫານຕໍ່ເຈົ້າຂອງຖິ່ນກຳເນີດ ເຊັ່ນ:

1. ຍົກເລີກໃບຢັ້ງຢືນນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ຂອງເຈົ້າຂອງຖິ່ນກຳເນີດ ແລະ ເຈົ້າຂອງຖິ່ນກຳເນີດຕ້ອງຢຸດເຊົາການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ;

2. ຍົກເລີກການຈົດທະບຽນຖິ່ນກຳເນີດ ແລະ ຈະຖືວ່າໃບຢັ້ງຢືນນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດກໍ່ຖືກຍົກເລີກເຊັ່ນດຽວກັນ.

**ມາດຕາ 28 ອາຍຸການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ**

ໃບອະນຸຍາດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ມີອາຍຸ ໜຶ່ງ ປີ ນັບແຕ່ວັນທີອອກໃບອະນຸຍາດ. ພາຍໃນໄລຍະທີ່ການອະນຸຍາດນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ ຍັງມີຜົນຢູ່ນັ້ນ ກົມຊັບສິນທາງປັນຍາ ສາມາດໂຈະ ຫຼື ຍົກເລີກການອະນຸຍາດດັ່ງກ່າວ ຫາກກວດພົບວ່າ ເຈົ້າຂອງຖິ່ນກຳເນີດ ບໍ່ສາມາດປະຕິບັດຕາມເງື່ອນໄຂຂອງການນຳໃຊ້ກາໝາຍຖິ່ນກຳເນີດແຫ່ງຊາດ.

## ໝວດທີ 5
## ສິດ ແລະ ໜ້າທີ່ ເຈົ້າຂອງຖິ່ນກຳເນີດ ແລະ ໜ່ວຍງານກວດກາ ການປະຕິບັດຄຸນລັກສະນະສະເພາະຂອງຖິ່ນກຳເນີດ

**ມາດຕາ 29 ສິດ ແລະ ໜ້າທີ່ຂອງເຈົ້າຂອງຖິ່ນກຳເນີດ**

ເຈົ້າຂອງຖິ່ນກຳເນີດ ເປັນຜູ້ຕາງໜ້າໃນການປົກປ້ອງສິດ ແລະ ຜົນປະໂຫຍດໃຫ້ແກ່ສະມາຊິກຂອງຕົນ ຊຶ່ງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ດຳເນີນການ ເພື່ອຮັບປະກັນໃຫ້ ສິນຄ້າຖິ່ນກຳເນີດຂອງຕົນ ມີຄຸນນະພາບ, ມີຄວາມດັ້ງເດີມ ແລະ ຊື່ສຽງ ທີ່ໄດ້ຮັບການຍອມຮັບຈາກຕະຫຼາດ ດ້ວຍການຕິດຕາມການນຳໃຊ້ຊື່ຂອງສິນຄ້າຖິ່ນກຳເນີດ ໃນທາງການຄ້າ ແລະ ໃນກໍລະນີເກີດມີຂໍ້ຜິດພາດໃດໜຶ່ງຕ້ອງແຈ້ງໃຫ້ກົມຊັບສິນທາງປັນຍາຊາບ;

2. ດຳເນີນການ ເພື່ອຮັບປະກັນໃຫ້ຖິ່ນກຳເນີດຂອງຕົນ ແລະ ສິດຕໍ່ຊັບສິນທາງປັນຍາ ທີ່ກ່ຽວຂ້ອງໄດ້ຮັບການປົກປ້ອງຕາມກົດໝາຍ;

3. ສ້າງຂໍ້ມູນ ແລະ ກິດຈະກຳການໂຄສະນາໂດຍມີເປົ້າໝາຍເພື່ອສື່ສານ ແລະ ປະຊາສຳພັນໃຫ້ຜູ້ບໍລິໂພກຮັບຮູ້ເຖິງຄຸນລັກສະນະສະເພາະ ຂອງສິນຄ້າຖິ່ນກຳເນີດ ຊຶ່ງເປັນການເພີ່ມມູນຄ່າໃຫ້ແກ່ສິນຄ້າດັ່ງກ່າວ;

4. ຄຸ້ມຄອງ, ຕິດຕາມ, ກວດກາສິນຄ້າຖິ່ນກຳເນີດ ເພື່ອໃຫ້ມີຄວາມສອດຄ່ອງຕາມຂໍ້ກຳນົດທີ່ໄດ້ລະບຸໄວ້ໃນເອກະສານຄຸນລັກສະນະສະເພາະຂອງຖິ່ນກຳເນີດ;

5. ດຳເນີນການ ເພື່ອປັບປຸງການດຳເນີນງານຂອງເຈົ້າຂອງຖິ່ນກຳເນີດ ລວມມີ ການພັດທະນາຄວາມຊຳນານທາງເສດຖະກິດ ແລະ ວາງແຜນຍຸດທະສາດທາງການຄ້າ, ວິເຄາະ, ເຜີຍແຜ່ຂໍ້ມູນດ້ານເສດຖະກິດຂອງສິນຄ້າຖິ່ນກຳເນີດດັ່ງກ່າວ ແລະ ໃຫ້ຄຳແນະນຳແກ່ສະມາຊິກຂອງຕົນ;

6. ດຳເນີນການ ເພື່ອຊ່ວຍເພີ່ມມູນຄ່າໃຫ້ສິນຄ້າຖິ່ນກຳເນີດຂອງຕົນ ໂດຍນຳໃຊ້ມາດຕະການປົກປ້ອງ ຫຼື ຕອບໂຕ້ຕໍ່ມາດຕະການທີ່ເກີດມີຄວາມສ່ຽງ ຫຼື ສ້າງຄວາມເສຍຫາຍຕໍ່ພາບພົດຂອງສິນຄ້າ;

7. ດຳເນີນການ ເພື່ອການປົກປ້ອງຖິ່ນກຳເນີດ, ມູນຄ່າຂອງສິນຄ້າຖິ່ນກຳເນີດ ແລະ ອານຸລັກຄວາມສົມດຸນຂອງລະບົບນິເວດ ໃນຂອບເຂດທີ່ກຳນົດເປັນຖິ່ນກຳເນີດ ແລະ ລວມທັງການເກັບກຳຂໍ້ມູນ ແລະ ສະຖິຕິກ່ຽວກັບຕ່ອງໂສ້ມູນຄ່າ ຂອງສິນຄ້າຖິ່ນກຳເນີດຂອງຕົນ;

8. ດຳເນີນມາດຕະການຕໍ່ສະມາຊິກ ທີ່ບໍ່ປະຕິບັດຕາມເອກະສານຄຸນລັກສະນະສະເພາະຂອງຖິ່ນກຳເນີດ ອີງຕາມການລາຍງານຂອງໜ່ວຍງານກວດກາຖິ່ນກຳເນີດ ໃນມາດຕາ 28 ຂອງຂໍ້ຕົກລົງສະບັບນີ້ ດັ່ງນີ້:

1) ໃຫ້ຄຳແນະນຳ;
2) ກ່າວຕັກເຕືອນ;
3) ຍົກເລີກສິດນຳໃຊ້ຖິ່ນກຳເນີດຂອງຜະລິດຕະພັນທີ່ປະຕິບັດຕາມເອກະສານຄຸນລັກສະນະສະເພາະຂອງຖິ່ນກຳເນີດ;

9. ລາຍງານຜົນການດຳເນີນມາດຕະການ ໃນຂໍ້ 8 ຂອງມາດຕານີ້ ໃຫ້ກົມຊັບສິນທາງປັນຍາຮັບຊາບ;

10. ລາຍງານຫາກົມຊັບສິນທາງປັນຍາ ໃນກໍລະນີພົບເຫັນ ການລະເມີດລະບຽບການທີ່ກ່ຽວຂ້ອງກັບຖິ່ນກຳເນີດ ຂອງສະມາຊິກ ຫຼື ບຸກຄົນທີ 3.

**ມາດຕາ 30 ໜ່ວຍງານກວດກາການປະຕິບັດຕາມຄຸນລັກສະນະສະເພາະຂອງຖິ່ນກຳເນີດ**

ໜ່ວຍງານກວດກາການປະຕິບັດຕາມຄຸນລັກສະນະສະເພາະຂອງຖິ່ນກຳເນີດ ແມ່ນໜ່ວຍງານທີ່ໃຫ້ຢັ້ງຢືນວ່າຜູ້ດຳເນີນການ ໄດ້ປະຕິບັດຕາມຄຸນລັກສະນະສະເພາະຂອງຖິ່ນກຳເນີດ ທີ່ເຈົ້າຂອງຖິ່ນກຳເນີດໄດ້ກຳນົດ, ໜ່ວຍງານດັ່ງກ່າວ ເປັນໜ່ວຍງານທີ່ໄດ້ຮັບການອະນຸຍາດໃນການປະຕິບັດວຽກງານກວດກາ ຫຼື ຢັ້ງຢືນ ໃນ ສປປ ລາວ ຫຼື ຕ່າງປະເທດ ຊຶ່ງອາດເປັນໜ່ວຍງານຂອງລັດ ຫຼື ເອກະຊົນທີ່ມີຄວາມຮັບຜິດຊອບ ແລະ ເປັນກາງໂດຍມີລະບົບກວດກາທີ່ເຊື່ອຖືໄດ້. ຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດມີສິດເລືອກໜ່ວຍງານກວດກາການປະຕິບັດຕາມຄຸນລັກສະນະສະເພາະຂອງຖິ່ນກຳເນີດ ຕາມຄວາມເໝາະສົມ.

ໜ່ວຍງານກວດກາການປະຕິບັດຕາມຄຸນລັກສະນະສະເພາະຂອງຖິ່ນກຳເນີດຕ້ອງຢັ້ງຢືນວ່າການຜະລິດສິນຄ້າສອດຄ່ອງກັບຂໍ້ກຳນົດຕ່າງໆ ທີ່ໄດ້ລະບຸໄວ້ໃນເອກະສານຄຸນລັກສະນະສະເພາະຂອງຖິ່ນກຳເນີດ.

ໜ່ວຍງານກວດກາການປະຕິບັດຕາມຄຸນລັກສະນະສະເພາະຂອງຖິ່ນກຳເນີດ ຕ້ອງສົ່ງບົດລາຍງານຜົນການກວດກາແຕ່ລະຄັ້ງໃຫ້ເຈົ້າຂອງຖິ່ນກຳເນີດ ແລະ ກົມຊັບສິນທາງປັນຍາ ໂດຍອີງຕາມລະດູການຜະລິດ ຫຼື ໃນຕອນທ້າຍຂອງປີປະຕິທິນ. ບົດລາຍງານໃດທີ່ບໍ່ເປັນພາສາລາວ ຕ້ອງແປເປັນພາສາລາວ ພ້ອມທັງມີການຢັ້ງຢືນຄວາມຖືກຕ້ອງຂອງການແປຈາກພາກສ່ວນທີ່ໄດ້ຮັບອະນຸຍາດຕາມກົດໝາຍ.

ໃນກໍລະນີ ຜູ້ດຳເນີນການບໍ່ປະຕິບັດຕາມເອກະສານຄຸນລັກສະນະຂອງຖິ່ນກຳເນີດ ໜ່ວຍງານກວດກາການປະຕິບັດຕາມຄຸນລັກສະນະສະເພາະຂອງຖິ່ນກຳເນີດ ຕ້ອງລາຍງານກ່ຽວກັບການບໍ່ປະຕິບັດດັ່ງກ່າວ ຫາເຈົ້າຂອງຖິ່ນກຳເນີດ ແລະ ລາຍງານໃຫ້ກົມຊັບສິນທາງປັນຍາຊາບ.

ກົມຊັບສິນທາງປັນຍາ ສາມາດເຊີນເຈົ້າຂອງຖິ່ນກຳເນີດ ຫຼື ບຸກຄົນທີ່ກ່ຽວຂ້ອງມາໃຫ້ຄຳອະທິບາຍ ຫຼື ເອົາຫຼັກຖານທີ່ຊີ້ໃຫ້ເຫັນວ່າ ຜູ້ດຳເນີນການບໍ່ໄດ້ປະຕິບັດຕາມເອກະສານຄຸນລັກສະນະຂອງຖິ່ນກຳເນີດ ຫຼື ໃນກໍລະນີຈຳເປັນ, ກົມຊັບສິນທາງປັນຍາ ສາມາດຂໍຄຳແນະນຳຈາກຜູ້ຊ່ຽວຊານທີ່ກ່ຽວຂ້ອງ ເພື່ອເປັນຂໍ້ມູນໃນການພິຈາລະນາ ແລະ ຕັດສິນບັນຫາດັ່ງກ່າວ.

## ໝວດທີ 6
## ການເປັນຜູ້ຕາງໜ້າໃນການຮ້ອງຂໍຈົດທະບຽນຖິ່ນກຳເນີດ ແລະ ດຳເນີນການອື່ນ

### ມາດຕາ 31 ບຸກຄົນ ທີ່ມີສິດເປັນຜູ້ຕາງໜ້າໃນການຮ້ອງຂໍຈົດທະບຽນຖິ່ນກຳເນີດ ແລະ ດຳເນີນການອື່ນ

ບຸກຄົນ ທີ່ມີສິດຕາງໜ້າໃນການດຳເນີນການຮ້ອງຂໍຈົດທະບຽນຖິ່ນກຳເນີດ ແລະ ດຳເນີນການອື່ນມີດັ່ງນີ້:

1. ທະນາຍຄວາມທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນການທາງດ້ານກົດໝາຍຢູ່ ສປປ ລາວ;
2. ບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ;
3. ພະນັກງານຂອງນິຕິບຸກຄົນ ຫຼື ການຈັດຕັ້ງ;
4. ພົນລະເມືອງລາວທີ່ຜູ້ຮ້ອງຂໍຈົດທະບຽນວ່າຈ້າງ.

ສຳລັບຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດຈາກຕ່າງປະເທດ ຕ້ອງຍື່ນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດຜ່ານບໍລິສັດຜູ້ຕາງໜ້າບໍລິການຈົດທະບຽນຊັບສິນທາງປັນຍາ ຫຼື ທະນາຍຄວາມ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການທາງດ້ານກົດໝາຍ ໃນ ສປປ ລາວ ເທົ່ານັ້ນ.

ຜູ້ຕາງໜ້າ ຕ້ອງແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງຕາມໃບມອບສິດ ທີ່ເຮັດເປັນລາຍລັກອັກສອນ ແລະ ມີລາຍເຊັນຂອງຜູ້ຮ້ອງຂໍຈົດທະບຽນຖິ່ນກຳເນີດ ຫຼື ຜູ້ມອບສິດ. ກົມຊັບສິນທາງປັນຍາ ຈະຮັບຮູ້ເງື່ອນໄຂທີ່ໄດ້ກຳນົດໄວ້ໃນໃບມອບສິດ, ເວັ້ນເສຍແຕ່ເງື່ອນໄຂຂອງໃບມອບສິດ ຫາກບໍ່ສອດຄ່ອງກັບກົດໝາຍ ຫຼື ລະບຽບການ.

### ມາດຕາ 32 ການມອບສິດໃຫ້ເປັນຜູ້ຕາງໜ້າ

ການມອບສິດ ໃຫ້ເປັນຜູ້ຕາງໜ້າ ຕ້ອງກຳນົດດັ່ງລຸ່ມນີ້:

1. ເງື່ອນໄຂ ແລະ ຂອບເຂດຂອງການເປັນຜູ້ຕາງໜ້າ;
2. ສິດທີ່ຖືກມອບໝາຍໃນການດຳເນີນການໃດໜຶ່ງທີ່ກ່ຽວຂ້ອງນຳກົມຊັບສິນທາງປັນຍາ;
3. ໄລຍະເວລາ (ຖ້າມີ);
4. ຜູ້ມອບສິດສາມາດຍົກເລີກໄດ້ທຸກເວລາ ໂດຍບໍ່ສົ່ງຜົນກະທົບຕໍ່ສິດຂອງຜູ້ຕາງໜ້າໃນການໄດ້ຮັບຄ່າຕອບແທນຈາກການບໍລິການ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນໃນລະຫວ່າງການຕິດຕໍ່ພົວພັນກັບກົມຊັບສິນທາງປັນຍາ.

ໃບມອບສິດໜຶ່ງຕ້ອງນຳໃຊ້ສະເພາະແຕ່ຄຳຮ້ອງດຽວເທົ່ານັ້ນ.

ໃນກໍລະນີໃບມອບສິດບໍ່ໄດ້ກຳນົດ ຂອບເຂດ ຫຼື ໄລຍະເວລາ ຂອງການເປັນຜູ້ຕາງໜ້າ ຫຼື ການດຳເນີນການອື່ນ ທີ່ກ່ຽວຂ້ອງກັບໃບມອບສິດດັ່ງກ່າວ ແລະ ອາຍຸຂອງໃບມອບສິດ ຖືວ່າສິ້ນສຸດລົງໃນເມື່ອທຸກບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງດັ່ງກ່າວ ຫຼື ການດຳເນີນການອື່ນ ຫາກສຳເລັດແລ້ວ, ແຕ່ບໍ່ເກີນໄລຍະເວລາ ສາມ ປີ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ໃນກໍລະນີ ຜູ້ອອກໃບມອບສິດເປັນ ນິຕິບຸກຄົນ ຫຼື ການຈັດຕັ້ງ ໃບມອບສິດຕ້ອງໄດ້ລົງລາຍເຊັນໂດຍຜູ້ມີສິດອໍານາດຂອງ ນິຕິບຸກຄົນ ຫຼື ການຈັດຕັ້ງ ດັ່ງກ່າວ.

## ໝວດທີ 7
## ການຄຸ້ມຄອງ ວຽກງານຖິ່ນກໍາເນີດ

### ມາດຕາ 33 ການຄຸ້ມຄອງວຽກງານຖິ່ນກໍາເນີດ

ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານຖິ່ນກໍາເນີດ ປະກອບມີ ສອງຂັ້ນ ຄື:

1. ຂັ້ນສູນກາງ ແມ່ນ ກົມຊັບສິນທາງປັນຍາ;
2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ.

### ມາດຕາ 34 ສິດ ແລະ ໜ້າທີ່ຂອງກົມຊັບສິນທາງປັນຍາ

ກົມຊັບສິນທາງປັນຍາມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກໍາ ກ່ຽວກັບການຄຸ້ມຄອງວຽກງານຖິ່ນກໍາເນີດເພື່ອນໍາສະເໜີຂັ້ນເທິງພິຈາລະນາ;
2. ເຜີຍແຜ່ແນະນໍາຂໍ້ຕົກລົງສະບັບນີ້ ແລະ ນິຕິກໍາທີ່ກ່ຽວຂ້ອງກັບວຽກງານຖິ່ນກໍາເນີດ;
3. ຮັບ ແລະ ພິຈາລະນາສໍານວນຄໍາຮ້ອງຂໍຈົດທະບຽນ, ການບັນທຶກການປ່ຽນແປງ ຊື່, ທີ່ຢູ່ ແລະ ຊື່ ແລະ ທີ່ຢູ່ ກ່ຽວກັບການຈົດທະບຽນຖິ່ນກໍາເນີດ;
4. ອອກໃບຢັ້ງຢືນ, ແຈ້ງປະຕິເສດ, ຍົກເລີກ ແລະ ອື່ນໆ ກ່ຽວກັບການຈົດທະບຽນຖິ່ນກໍາເນີດ;
5. ຄົ້ນຄວ້າ ແລະ ພິຈາລະນາ ຄໍາຊີ້ແຈງຕໍ່ການແຈ້ງປະຕິເສດ ກ່ຽວກັບການຈົດທະບຽນຖິ່ນກໍາເນີດ;
6. ໂຈະຊົ່ວຄາວ ຫຼື ຖອນສິດນໍາໃຊ້ຖິ່ນກໍາເນີດຢ່າງຖາວອນ;
7. ບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບ ຖິ່ນກໍາເນີດ;
8. ຊຸກຍູ້ ແລະ ສົ່ງເສີມ ວຽກງານການຈົດທະບຽນຖິ່ນກໍາເນີດ;
9. ຄຸ້ມຄອງກາໝາຍຖິ່ນກໍາເນີດແຫ່ງຊາດ;
10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຖິ່ນກໍາເນີດ ໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;
11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 35 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ

ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ແນະນໍາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ນິຕິກໍາ ກ່ຽວກັບວຽກງານຖິ່ນກໍາເນີດ;
2. ຄຸ້ມຄອງ, ຕິດຕາມ, ຊຸກຍູ້ສົ່ງເສີມເຈົ້າຂອງຖິ່ນກໍາເນີດ;
3. ຕິດຕາມ ແລະ ກວດກາ ການນໍາໃຊ້ກາໝາຍຖິ່ນກໍາເນີດແຫ່ງຊາດ;
4. ມອບໝາຍຄວາມຮັບຜິດຊອບໃຫ້ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ນະຄອນ ຕາມຄວາມເໝາະສົມ;

5. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຖິ່ນກຳເນີດ ໃຫ້ກົມຊັບສິນທາງປັນຍາ ເພື່ອຊາບ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

### ມາດຕາ 36 ການຈັດຕັ້ງປະຕິບັດ

ມອບໃຫ້ກົມຊັບສິນທາງປັນຍາ ປະສານສົມທົບກັບພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່ ແນະນຳ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

### ມາດຕາ 37 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍຖິ່ນກຳເນີດ ສະບັບເລກທີ 2221/ກອຕ, ລົງວັນທີ 03 ຕຸລາ 2019.

ລັດຖະມົນຕີ

ມະໄລທອງ ກົມມະສິດ